BIBLE 316

# ພຣະຄຳພີແມ່ນຫຍັງ?

**ພຣະຄຳພີແມ່ນຫຍັງ?** ພຣະເຈົ້າກຳລັງກ່າວຕໍ່ທ່ານ. ເຊິ່ງບໍ່ແມ່ນແຕ່ເລື່ອງທີ່ກ່ຽວກັບພຣະເຈົ້າເທົ່ານັ້ນ. ແຕ່ມາຈາກພຣະເຈົ້າ. ເຊິ່ງເປັນຫຼາຍກວ່າແຮງບັນດານໃຈ. ເພາະໄດ້ຮັບການຊົງບັນດານໃຈ (ບັນດົນໃຈ) ຈາກພຣະເຈົ້າ. ຈົ່ງອ່ານ, ຟັງ ແລະ ຄົ້ນຄິດ ຮຽນຮູ້ຈາກພຣະອົງ ແລະ ນຳມາປະຍຸກໃຊ້ໃນຊີວິດຂອງທ່ານ. ອັກຄະສາວົກເປໂຕ ໄດ້ຂຽນໄວ້ວ່າ, "*ຈົ່ງເປັນເໝືອນດັ່ງເດັກນ້ອຍໆທີ່ເກີດໃໝ່ ຈົ່ງຮ້ອນໃຈປາຖະໜາຫານໍ້ານົມອັນບໍຣິສຸດຝ່າຍຈິດວິນຍານ ເພື່ອວ່າດ້ວຍນໍ້ານົມນັ້ນ ພວກເຈົ້າຈະໄດ້ຈະເລີນຂຶ້ນເຖິງຄວາມພົ້ນ*". 1 ເປໂຕ 2:2.

**ສິ່ງໃດທີ່ເຮັດໃຫ້ພຣະຄຳພີ ມີຄວາມພິເສດ?** ພຣະຄຳທັງ 66 ເຫຼັ້ມ ໄດ້ຖືກຂຽນໄວ້ໃນສາມພາສາ (ພາສາເຮັບເຣີ, ພາສາອາຣາເມກ, ແລະພາສາກຣີກ)ໂດຍຜູ້ຊາຍກ່ວາສີ່ສິບຄົນ ຕະຫຼອດໄລຍະເວລາປະມານ 1,600 ປີ ໂດຍມີແກ່ນສານອັນດຽວກັນ ແລະ ສອດຄ່ອງກັນ ເຊິ່ງຖືກຂຽນຂຶ້ນຕະຫຼອດຫຼາຍສະຕະວັດ. ພຣະຄຳພາກພັນທະສັນຍາໃໝ່ ໄດ້ຮັບການຮັບຮອງຄວາມຖືກຕ້ອງຜ່ານຕົ້ນສະບັບບູຮານ ທັງສະບັບສົມບູນ ແລະ ບາງສ່ວນກ່ວາ 5,000 ສະບັບ. ຄວາມຖືກຕ້ອງຂອງພຣະຄຳພີໄດ້ຮັບການຢັ້ງຢືນຈາກຄຳທຳນວາຍທີ່ສຳເລັດເປັນຈິງ, ຜ່ານການຄົ້ນພົບທາງບູຮານຄະດີສະໄໝໃໝ່, ຄວາມຖືກຕ້ອງທາງພູມສາດ ແລະ ສະຕິປັນຍາເໜືອການເວລາ ຂອງພຣະຄຳສຸພາສິດ. ພຣະຄຳພີເປັນໜັງສືສຳຄັນ ແລະມີອິດທິພົນຫຼາຍທີ່ສຸດ ເທົ່າທີ່ເຄີຍມີການຂຽນຂຶ້ນ. ບໍ່ເຄີຍມີໜັງສືເຫຼັ້ມໃດຖືກຕີພິມ, ຖືກເຜີຍແຜ່ຢ່າງກ້ວາງຂວາງ, ແລະຖືກແປເປັນພາສາຕ່າງໆຫຼາຍເທົ່ານີ້ມາກ່ອນ, ພຣະຄຳພີຊົງປ່ຽນແປງຊີວິດຂອງຜູ້ຄົນໄດ້ຢ່າງມີພະລັງ ແລະ ດຳລົງຢູ່ມາດົນນານຫຼາຍສະຕະວັດ. ພຣະຄຳພີຊົງຣິດອຳນາດສູງສຸດພຽງໜຶ່ງດຽວໃນສິ່ງທີ່ເຮົາຄວນເຊື່ອ ແລະ ວິທີທີ່ເຮົາຄວນດຳເນີນຊີວິດ. ພຣະຄຳພີເປັນໜັງສືທີ່ຊົງພຣະກຽດ ເໜືອໜັງສືເຫຼັ້ມອື່ນໆທັງໝົດ.

**ພຣະຄຳພີມີລັກສະນະເດັ່ນຫຍັງແດ່?**

ພຣະຄຳພີໄດ້ຮັບການບັນດົນໃຈຈາກພຣະເຈົ້າ. "*ພຣະຄຳພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ*", 2 ຕີໂມທຽວ 3:16.

ພຣະຄຳພີຊົງເປັນຄວາມຈິງ. ພຣະເຢຊູໄດ້ອະທິຖານ, "*ພຣະຄຳຂອງພຣະອົງເປັນຄວາມຈິງ, ຂໍໂຜດຊຳລະໃຫ້ພວກເຂົາບໍຣິສຸດດ້ວຍຄວາມຈິງຂອງພຣະອົງ*", ໂຢຮັນ 17:17.

ພຣະຄຳພີມີຄວາມຖືກຕ້ອງຊັດເຈນໃນທຸກລາຍລະອຽດ. ພຣະເຢຊູຊົງກ່າວວ່າ, "*ເຮົາບອກພວກເຈົ້າຕາມຄວາມຈິງວ່າ, ຕາບໃດທີ່ຟ້າ ແລະດິນຍັງຕັ້ງຢູ່ ແມ່ນແຕ່ເມັດ ຫລື ຂີດປີກຍ່ອຍອັນເລັກນ້ອຍທີ່ສຸດຂອງກົດບັນຍັດຈະບໍ່ຖືກລຶບລ້າງໄປ ຈົນກວ່າທຸກສິ່ງຈະເກີດຂຶ້ນຄົບຖ້ວນ*", ມັດທາຍ 5:18. ຄວາມຖືກຕ້ອງຂອງຕົ້ນສະບັບດັ້ງເດີມຍັງຖືກຮັກສາໄວ້ ດັ່ງນັ້ນຄຳແປທີ່ດີທີ່ສຸດໃນປະຈຸບັນຈຶ່ງມີຄວາມຖືກຕ້ອງຫຼາຍກ່ວາ 99%.

ພຣະຄຳພີຊົງບໍລິສຸດ. "*ຄຳສັນຍາຂອງພຣະເຈົ້າຢາເວນັ້ນກໍເປັນທີ່ໄວ້ວາງໃຈ ບໍຣິສຸດດັ່ງເງິນຖືກຫລອມໃນໄຟເຖິງເຈັດຄັ້ງ*". ເພງສັນລະເສີນ 12:6.

ພຣະຄຳພີຊົງເປັນຢູ່ນິດນິຣັນ. "*ຖືກແລ້ວ ຕົ້ນຫຍ້າຫ່ຽວແຫ້ງ, ດອກໄມ້ຫລ່າເຫລືອງ, ແຕ່ຖ້ອຍຄຳຂອງພຣະເຈົ້າຂອງພວກເຮົາກໍດຳລົງຢູ່ຕະຫລອດໄປເປັນນິດ*", ເອຊາຢາ 40:8. ພຣະຄຳພີຍັງມີຄວາມກ່ຽວຂ້ອງກັບປະຈຸບັນ ເຊັ່ນດຽວກັນກັບຄັ້ງທຳອິດທີ່ພຣະຄຳຖືກຂຽນຂຶ້ນ.

ພຣະຄຳພີຊົງຣິດອຳນາດ. ເຮັບເຣີ 4:12, "*ເພາະວ່າພຣະທຳຂອງພຣະເຈົ້າປະກອບດ້ວຍຊີວິດ ແລະ ຣິດເດດ ຄົມກວ່າດາບສອງຄົມທຸກດວງ ແທງຊອດເຖິງຈິດໃຈ ແລະວິນຍານ ຕະຫລອດທັງຄໍ່ກະດູກ ແລະໄຂໃນກະດູກເຊື່ອມຕິດຕໍ່ກັນ ຈຶ່ງສັງເກດຮູ້ຄວາມຄິດ ແລະຄວາມມຸ່ງໝາຍໃນໃຈໄດ້*".

**ພຣະຄຳພີໄດ້ໃຫ້ປະໂຫຍດສ່ວນຕົວຫຍັງແດ່?**

ພຣະຄຳພີຊົງກຽມພວກເຮົາໃຫ້ພ້ອມ. "*ພຣະຄຳທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ ແລະເປັນປະໂຫຍດ ໃນການສອນ, ການກ່າວຕັກເຕືອນວ່າກ່າວ, ການປັບປຸງແກ້ໄຂໃຫ້ຖືກຕ້ອງ ແລະການອົບຮົມໃນທາງຊອບທຳ, ເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສຳເລັດ ແລະຈັດຕຽມໄວ້ພ້ອມສຳລັບການດີທຸກຢ່າງ*". 2 ຕີໂມທຽວ 3:16-17.

ພຣະຄຳພີຊົງຊ່ວຍພວກເຮົາບໍ່ໃຫ້ເຮັດບາບ. ເພງສັນລະເສີນ 119:9, 11 ໄດ້ບອກພວກເຮົາວ່າ ຈະເຮັດໃຫ້ມັນເກີດຂຶ້ນແນວໃດ. "*ຄົນໜຸ່ມສາວຮັກສາຊີວິດໃຫ້ບໍຣິສຸດໄດ້ຢ່າງໃດ? ກໍໂດຍເຊື່ອຟັງຂໍ້ຄຳສັ່ງຂອງພຣະເຈົ້າ*". ແລະ ຖ້ອຍຄຳຂອງພຣະອົງໄວ້ຢູ່ໃນຈິດໃຈເພື່ອວ່າຈະບໍ່ໄດ້ເຮັດບາບຕໍ່ສູ້ພຣະອົງ.

ພຣະຄຳພີໃຫ້ຄຳແນະນຳແກ່ພວກເຮົາໃນວັນນີ້ (ບາດກ້າວຕໍ່ໄປຂອງພວກເຮົາ) ແລະ ນຳທິດທາງຂອງພວກເຮົາໃນອະນາຄົດ (ແນວທາງທີ່ຈະເດີນຕາມ). "*ຖ້ອຍຄຳຂອງພຣະອົງເປັນແສງໂຄມນຳທາງໃຫ້ຂ້ານ້ອຍ ແລະ ແສງແຈ້ງສຳລັບທາງເດີນໃຫ້ຂ້ານ້ອຍ*", ເພງສັນລະເສີນ 119:105.

ພຣະຄຳພີຊີ້ງໃຫ້ສະຕິປັນຍາ. "*ການອະທິບາຍຂໍ້ຄຳສັ່ງສອນຂອງພຣະອົງໃຫ້ແສງສະຫວ່າງ ແລະ ນຳປັນຍາໃຫ້ແກ່ພວກຄົນໂງ່ຈ້າດ້ວຍ*". ເພງສັນລະເສີນ 119:130. ສະຕິປັນຍາເໜືອການເວລາ ພົບເຫັນໄດ້ໃນ ພຣະທຳສຸພາສິດ ໃນພາກພັນທະສັນຍາເດີມ.

ພຣະຄຳພີຊ່ວຍພວກເຮົາຜ່ານພົ້ນຄວາມຫຍຸ້ງຍາກ. ເພງສັນລະເສີນ 119:50 ໄດ້ໜູນໃຈພວກເຮົາວ່າ, "*ແມ່ນແຕ່ໃນຍາມລຳບາກກໍໄດ້ຮັບຄຳໜູນໃຈ ເພາະພຣະສັນຍາໃຫ້ຊີວິດແກ່ຂ້ານ້ອຍໄດ້*".

ພຣະຄຳພີຊີ້ງໃຫ້ຄວາມຫວັງ. "*ທຸກສິ່ງທີ່ມີຄຳຂຽນໄວ້ໃນພຣະຄຳພີ ການອ້າງອີງເຖິງພັນທະສັນຍາເດີມ ກໍມີໄວ້ເພື່ອສັ່ງສອນພວກເຮົາ ເພື່ອວ່າພວກເຮົາຈະມີຄວາມຫວັງດ້ວຍຄວາມອົດທົນ ແລະມີຄວາມຊູໃຈ ດ້ວຍພຣະຄຳພີທີ່ໄດ້ກ່າວໄວ້ນັ້ນ*", ໂຣມ 15:4.

ພຣະຄຳພີຊີ້ງໃຫ້ສັນຕິສຸກ. ເພງສັນລະເສີນ 119:165 ຊີ້ງສັນຍາວ່າ "*ຄົນທີ່ຮັກກົດບັນຍັດກໍມີຄວາມປອດໄພດີ ແລະ ບໍ່ມີສິ່ງໃດທີ່ເຮັດໃຫ້ພວກເຂົາລົ້ມລົງໄດ້*".

ພຣະຄຳພີຊີ້ງນຳມາເຊິ່ງຄວາມຊົມຊື່ນຍິນດີ. ເຢເຣມີຢາ 15:16 ໄດ້ໃຫ້ຕົວຢ່າງວ່າ, "*ຖ້ອຍຄຳຂອງພຣະອົງຈຶ່ງເຮັດໃຫ້ຈິດໃຈຂອງຂ້ານ້ອຍ ເຕັມລົ້ນໄປດ້ວຍຄວາມຊົມຊື່ນຍິນດີ ແລະ ຄວາມສຸກໃຈ*".

**ຄວນອ່ານ ຫຼື ຟັງພຣະຄຳພີແນວໃດ?** ລອງພິຈາລະນາຫຼາຍກ່ວາໜຶ່ງຂໍ້ພຣະຄຳພີ. ລອງພິຈາລະນາຈຸດປະສົງສີ່ປະການຂອງ 2 ຕີໂມທຽວ 3:16 ທີ່ກ່າວ່າ "*ພຣະຄຳພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ ແລະເປັນປະໂຫຍດ ໃນການສອນ, ການກ່າວຕັກເຕືອນວ່າກ່າວ, ການປັບປຸງແກ້ໄຂໃຫ້ຖືກຕ້ອງ ແລະການອົບຮົມໃນທາງຊອບທຳ*". ໃນຂະນະທີ່ທ່ານອ່ານ ຫຼື ຟັງ, ຈົ່ງຖາມຄຳຖາມສີ່ຂໍ້ນີ້. ສິ່ງນີ້ໄດ້ສອນເຮົາຫຍັງແດ່?, ສິ່ງນີ້ໄດ້ຕຳນິຕິຕຽນເຮົາແນວໃດ? ເຮົາເອງຕ້ອງແກ້ໄຂຫຍັງແດ່? ສິ່ງນີ້ໄດ້ຝຶກເຮົາໃຫ້ເປັນຄົນຊອບທຳຫຼາຍຂຶ້ນແນວໃດ?

**ຖ້າເຮົາບໍ່ມີພຣະຄຳພີເດຈະເປັນແນວໃດ?** ຈົ່ງພະຍາຍາມທຸກວິທີທາງເພື່ອຊື້ພຣະຄຳພີ ສະບັບແປທີ່ດີທີ່ສຸດໃຫ້ໄດ້. ແຕ່ຖ້າທ່ານບໍ່ສາມາດຊື້ໄດ້, ກໍຍັງມີພຣະຄຳພີອອນລາຍຈຳນວນຫຼວງຫຼາຍທີ່ສາມາດອ່ານ ຫຼື ຟັງໄດ້ໂດຍບໍ່ເສຍຄ່າໃຊ້ຈ່າຍ. ລອງພິຈາລະນາຊື້ພຣະຄຳພີຮ່ວມກັບໝູ່ເພື່ອນຄົນໃດໜຶ່ງ ຫຼື ຫຼາຍຄົນແລ້ວປັນກັນອ່ານ ຫຼືຂໍໃຫ້ຄຣິດຕະຈັກ ຫຼື ພີ່ນ້ອງໃນຄວາມເຊື່ອຂອງທ່ານຄົນໜຶ່ງ ອ່ານພຣະຄຳພີໃຫ້ກຸ່ມຟັງ ແລະ ຕັ້ງໃຈຟັງ. ຄົນທັງຫລາຍທີ່ໄດ້ຟັງຖ້ອຍຄຳຂອງພຣະເຈົ້າ ແລະ ປະຕິບັດຕາມ ກໍມີຄວາມສຸກຫລາຍກວ່ານັ້ນອີກ . ເຊື່ອຟັງ ແລະ ປະຕິບັດຕາມ ລູກາ 11:28.

**ຂໍ້ພຣະຄຳພີພິເສດ ສຳລັບບັນດາຄູສອນພຣະຄຳພີ ແລະ ຜູ້ນຳມີຫຍັງແດ່?** ຈົ່ງເປັນສາວົກຂອງພຣະເຢຊູທີ່ຕິສະໜິດ (ດຳນີນຊີວິດ) ຢູ່ໃນພຣະຄຳຂອງພຣະເຈົ້າ. ດັ່ງນັ້ນ ພຣະເຢຊູຈຶ່ງກ່າວກັບຊາວຢິວທີ່ເຊື່ອໃນພຣະອົງວ່າ, "*ຖ້າພວກເຈົ້າຕັ້ງໝັ້ນຢູ່ໃນຖ້ອຍຄຳຂອງເຮົາ ພວກເຈົ້າກໍເປັນສາວົກແທ້ຂອງເຮົາ*", ໂຢຮັນ 8:31. ສຶກສາພຣະຄຳພີເພື່ອໃຫ້ໄດ້ຮັບການຍອມຮັບ. "*ຈົ່ງອົດສາພະຍາຍາມສະແດງຕົນ ເໝືອນເປັນຄົນທີ່ພິສູດແລ້ວຕໍ່ພຣະພັກພຣະເຈົ້າ ເປັນຄົນງານທີ່ບໍ່ຕ້ອງອາຍ ແລະໃຊ້ພຣະທຳແຫ່ງຄວາມຈິງຢ່າງຖືກຕ້ອງ*". 2 ຕີໂມທຽວ 2:15.

**ຍ້ອນຫຍັງພຣະຄຳພີຈຶ່ງສຳຄັນນິດນິຣັນ?** ອັກຄະສາວົໂຢຮັນ ໄດ້ອະທິບາຍເຖິງຈຸດປະສົງ ໃນການຂຽນຂ່າວປະເສີດຂອງເພິ່ນເອງວ່າ. ຈຸດປະສົງນີ້ສາມາດນຳໄປປະຍຸກໃຊ້ກັບພຣະຄຳພີທຸກເຫຼັ້ມໄດ້. "*ພຣະເຢຊູເຈົ້າເຮັດການອັດສະຈັນອື່ນໆອີກຫລາຍປະການ ຕໍ່ໜ້າພວກສາວົກຂອງພຣະອົງ ແຕ່ບໍ່ໄດ້ຈົດໄວ້ໃນໜັງສືເຫຼັ້ມນີ້. ການທີ່ໄດ້ຈົດເຫດການເຫຼົ່ານີ້ໄວ້ເພື່ອເຈົ້າທັງຫລາຍຈະໄດ້ເຊື່ອ ວ່າພຣະເຢຊູເຈົ້າເປັນພຣະຄຣິດພຣະບຸດຂອງພຣະເຈົ້າ ແລະໂດຍທາງຄວາມເຊື່ອໃນພຣະນາມຂອງພຣະອົງນັ້ນ ພວກເຈົ້າຈະມີຊີວິດ*". ໂຢຮັນ 20:30-31. ທ່ານເຊື່ອໃນອົງພຣະເຢຊູ ແລະມີຊີວິດອັນຕະຫຼອດໄປເປັນນິດໄດ້ແນວໃດ? ຄົ້ນຫາຄຳຕອບໄດ້ທີ່ www.Gospel316.org.

**"ຖືກແລ້ວ ຕົ້ນຫຍ້າຫ່ຽວແຫ້ງ, ດອກໄມ້ຫລ່າເຫລືອງ, ແຕ່ຖ້ອຍຄຳຂອງພຣະເຈົ້າຂອງພວກເຮົາກໍດຳລົງຢູ່ຕະຫລອດໄປເປັນນິດ". ເອຊາຢາ 40:8.**

*ພຣະຄຳພີແມ່ນຫຍັງ?* © 2025 ໂດຍ John D. Morris III ຈັດພິມມາໂດຍ Acts One Eight. ທ່ານສາມາດພິມ, ສຳເນົາ, ແລະ ແຈກຢາຍ ສິ່ທີ່ຂຽນໄວ້ໂດຍ ບໍ່ຄິດເງິນ ຖ້າບໍ່ມີການປ່ຽນແປງຂໍ້ຄວາມຫຼື ຈຸດປະສົງ. ທ່ານສາມາດພິມສື່ໃໝ່ໄດ້ອີກ ຖ້າສະເໜີຄວາມປະສົງແລະຂໍ້ມູນຂອງທ່ານຢູ່ໃນຮູບແບບຂອງຂໍ້ຄວາມ. Bible316 ເປັນບໍລິການພຣະກຳນິດທີ່ມີຈຸດປະສົງຊ່ວຍຜູ້ຄົນເຂົ້າໃຈພຣະເຢຊູຄຣິດ ແລະ ໃຫ້ກຳລັງໃຈໃນການດຳລົງຊີວິດຂອງພຣະອົງ. ທ່ານສາມາດສື່ສານກັບ Acts One Eight (ຜູ້ພິມສາລະບັນນີ້) ໄດ້ທີ່: Hello@Mail316.org. ພາສາບາງພາສາທັງໝົດ ຈະຖືກພາສາທີ່ຈັດພິມໃຫ້ໂດຍ www.ChristianLingua.com. ພຣະຄຳພີແມ່ນຫຍັງ? ພາສາອັງກິດເປັນຕົ້ນສະບັບຈັດພິມໂດຍສະບັບໃນເວັບໄຊທ໌ www.Bible316.org. ພຣະຄຳພີໃນສະບັບພາສາອັງກິດແມ່ນມາຈາກ The Lockman Foundation’s New American Standard Bible. ຂໍ້ຄວາມພຣະຄຳພີອາດໄດ້ຮັບການແປມາຈາກ United Bible Societies.